# ງານພົບປະສັງສັນຄັ້ງທີສອງ

ໂດຍ: ບ່າວຫຼັກເຈັດ

ບັລຍາຍໄດ້ຄົບຂໍ້          ເລີຍຂໍຕໍ່ແຊມເສີມ
ເພີ້ມເຕີມທາງແນວຄິດ          ມິດເພື່ອນຄຣູໃຫ້ເຫັນແຈ້ງ
ສາວຫຼັກເຈັດແປງທາງຊີ້          ອ້າຍເຫັນດີວ່າສອດຄ່ອງ
ຣີຢູນຽນຄັ້ງທີສອງ     ອີກສອງປີຂ້າງໜ້າ     ໃຫ້ມາພໍ້ພົບກັນ

ຣີຢູນຽນທີສອງນັ້ນ          ຊິຈັດຢູ່ການາດາ
ເອື້ອຍຍິນມະລາມີປະສົງ          ສົ່ງຈົດໝາຍວຽນເວົ້າ
ຫຼາຍຄົນຮວມກັນເຊົ້າ          ຈຶ່ງເບົາມືຍີ້ແບ່ງ
ວຽກໜັກໜາພາກັນແຕ່ງ     ແບ່ງກັນເຮັດຮອບດ້ານ     ແຜນການນັ້ນຊິແລ່ນເດີນ

ເຮົາຂໍຮ້ອງຮຽກເອີ້ນ          ເຊີນໝູ່ເພື່ອນທັງຫຼາຍ
ໃຫ້ປະສານຮວມພລັງ          ເພື່ອສ້າງສັນວຽກງານກ້າວ
ສຸມສະຕິປັນຍາເຊົ້າ          ເວົ້າກົມກຽວກ້ຽວກ່າຍ
ທັງຣຸ່ນນ້ອງເອື້ອຍອ້າຍ          ອາຈານພ້ອມພ່ຳກັນ

ຣີຢູນຽນຄັ້ງໜຶ່ງນັ້ນ          ຜົລໄດ້ຮັບມີຫຼວງຫຼາຍ
ເກີນຄາດໝາຍເຮົາກະຕວງ          ຊ່ວງໃຈຜູ້ຈັດຕັ້ງ
ນາງຂັບເງິນພູມໃຈລົ້ນ          ຄຣູທຸກຄົນກໍຊົມຊື່ນ
ຄືກັບຝັນແລ້ວຕື່ນ     ຊື່ນໃຈໃນບາດກ້າວ     ພວກເຮົາໄດ້ຮ່ວມມື

ດຽວນີ້     ທຸກຄົນທາວຍ່ອງຢີ້          ຮູ້ຈັກຂ່າວຄາວກັນ
ໃຈປະສານໃນແນວຄິດ          ເປັນມິດກັນເມືອໜ້າ
ພາກັນຫາທາງເຊົ້າ          ຮວມເອົາກັນເປັນກ້ອນກຸ່ມ
ຄວາມຮັກແພງຕ່ອມຕຸ້ມ          ຊຸມແຊວເອີ້ນຮຽກຫາ     ກັນແລ້ວ

ອີກສອງປີຂ້າງໜ້າ ພົບກັນຢູ່ ໂຕຣິນໂຕ
ໂທຖາມຄວາມນຳສົມສັກ ວ່າຄັກໃຈແທ້ຄາວນີ້
ດ້ານຕົນຕຣີກໍເຫັນຍ້ອງ ໜໍວັນທອງເອົາໃຈໃສ່
ພ້ອມທັງອາຈານໃຫຍ່ ຂຽນແຕ່ງເພງພຽບພ້ອມ ທັງຝຶກຊ້ອມບໍ່ຖອຍ

ສ່ວນວຽກງານໃຫຍ່ນ້ອຍ ພາກັນຊ່ອຍຈັດຫາ
ເອື້ອຍຍິນມະລາເລີ້ມວາງແຜນ ວິ້ງແລ່ນຕຽມແຕ່ງດຽວນີ້
ທາງເວີນມີກໍຫັນຫ້າວ ພາກັນເອົາໃຈໃສ່
ອ້າຍທອງຄຳກໍເຕັມໃຈ ຍິນດີຮັບຮອບດ້ານ ບໍ່ຂັດຄ້ານຊິຍ່າງຕາມ

ເອື້ອຍໜູຮັກກໍບໍ່ຫ້າມ ພ້ອມທຸກຢ່າງເຫັນດີ
ສ່ວນພູມີແລະພວງພັນ ຮ່ວມປະສານບໍ່ຄາຂ້ອງ
ໜໍວັນທອງຕຽມການໄວ້ ເອົາສົມໃຈ ໂດດເລີ ສ່ຽວ
ເຮົາຫລົນຕຣີດູກຫລຽວ ສ່ຽວສົມສັກຊິດັບຕ້ອນ ຂົນຄົນຈ້ອນຈາກເດີ່ນຍົນ

ສ່ວນດ້ານການຄິດຄົ້ນ ຫຼືເຕັ້ນແຕ່ງວາງແຜນ
ແມ່ນຕ້ອງການທັງແນວຄິດ ຕິດຕໍ່ມາຫາໄດ້
ຂ້ອຍເຕັມໃຈຊິຊູຊວ້ານ ຕາມສົມຄວນທີ່ເຄີຍຜ່ານ
ເຄີຍຮ່ວມແຮງປະສານ ກັບຂັນເງິນເທື່ອແລ້ວ ເດີນແຖວໜ້າຄູ່ກັນ

ສ່ວນອີກແຮງໜຶ່ງນັ້ນ ຄືອ້າຍໃຫຍ່ວັນພິລາ
ເພິ່ນສັນຫາແນວປະດັບ ສຳລັບງານໃຫ້ເລີງຣື້ນ
ພົດພື້ນຄືເຫັນນັ້ນ ຫຼາຍລາຍການບໍ່ໜ້າເບື່ອ
ເຊື່ອຝີມືຊຸມໝູ່ເຈົ້າ ອາສາເຂົ້າຊ່ວຍອີກແຮງ ຈິງແລ້ວ

ຢ່າຫາວ່າກັ່ນແກ້ງ          ບັງອາດແຊ່ງ  ມືຈອງຫອງ
ຫມໍວັນທອງກັບໄພທູນ          ຊ່ວຍເຈື້ອຈຸນຄູນໂຊກ
ຊຸດທີກາຫຼາຍຄົນແທ້          ຊິໄປແວເຊົາເຮືອນເພື່ອນ
ເຮົາຢາກຂໍຢ້ຳເຕືອນ   ຢ້ານເພື່ອນມົວແຕ່ພຸ້ນພີ້   ດົນຕຣີນັ້ນໃຫ້ຢູ່ຫຼັງ   ເລີຫມໍເລີ

ຄັ້ງທີຫນຶ່ງເຄີຍພາດພັ້ງ          ເຮົາຍັງຈື່ມນຳສົມສັກ   ຢູ່ເດີ
ບໍ່ຕ້ອງຫນັກໃຈຫຼາຍ          ໃຫ້ສະຫາຍນັ້ນຕຽມພ້ອມ
ຍອມບອກຄວາມຈິງໄດ້          ວ່າມີໃຈຍິງໃດແນ່
ຢ່າໄປແວຜູ້ນີ້   ຢ່າໄປແວພຸ້ນນັ້ນ   ມັນຊິຫຍຸ້ງບຸງໃສ່ໄຫມ

ຄັນເພື່ອນມີໃຈໃຫ້          ສາວຫນຶ່ງຢ່າມີສອງ   ເດີເພື່ອນເດີ
ຢາກກ່ຽວດອງກັບສາວຄູ          ສູ້ໃຫ້ເຖິງ  ຢ່າຖອຍກ້າວ
ເອົາໃຈສາວນຳງອນງໍ້          ຫມໍສົມສັກກະເປົ໋າໃຫຍ່   ແທ້ເດີ
ຢ່າໄດ້ເຮັດປ່ອຍໄກ່   ເປັນເຈັດສີ່ເກົ້າແປດຫ້າ   ຊິຂາຍຫນ້າຮອດເອື້ອຍຍິນ   ພຸ້ນໃດ